CHIAs

# ພາລະບົດບາດ ແລະ ໜ້າທີ່ຂອງພະນັກງານ ພາກສະໜາມ

| | |
|---|---|
| **ຈັດຊື້ຈັດຈ້າງພະນັກງານເລກທີ:** | 24-SB1874 |
| **ວັນທີເປີດຮັບສະໝັກ:** | 9 ກັນຍາ, 2024 |
| **ວັນທີປິດການສອບຖາມ:** | 13 ກັນຍາ, 2024 |
| **ວັນທີປິດຮັບສະໝັກ:** | 19 ກັນຍາ, 2024 |
| **ສະຖານທີປະຈຳການ:** | Savannakhet province |
| **ຕິດຕໍ່ພົວພັນ:** | ຈິນດາວັນ ສີງຫາລາດ<br>ອີເມວ: chindavanh.chias@gmail.com<br>ໂທ: 020 91731133 |

**ຄວາມເປັນມາ:**
ສະມາຄົມ ສຸຂະພາບຊຸມຊົນ ແລະ ການມີສ່ວນຮ່ວມ (ສສຣ) ແມ່ນອົງການຈັດຕັ້ງສັງຄົມລາວ ທີ່ເຮັດວຽກກ່ຽວກັບການສົ່ງເສີມສຸຂະພາບ ແລະ ການປົກປ້ອງທາງສັງຄົມສໍາຫລັບກຸ່ມປະຊາກອນທີ່ມີເບາະບາງ ແລະ ມີຄວາມສ່ຽງ. ສສຣ ມີຈຸດປະສົງໃນການສະໜັບສະໜູນຊຸມຊົນເພື່ອການມີສ່ວນຮ່ວມໃນການບັນລຸຍຸດທະສາດຍຸຕິພະຍາດວັນນະໂລກໂດຍເນັ້ນໃສ່ເປົ້າໝາຍ 15 ເມືອງໃນແຂວງສະຫວັນນະເຂດ. ໂຄງການດັ່ງກ່າວແມ່ນໄດ້ຮັບການສະໜັບສະໜູນໂດຍ L' Initiative ແລະ Expertise France.

**ພາລະບົດບາດໂດຍລວມ:**
ພະນັກງານພາກສະໜາມມີພາລະບົດບາດໃນການຈັດຕັ້ງປະຕິບັດກິດຈະກໍາໂດຍກົງກັບຊຸມຊົນເປົ້າໝາມໂດຍເນັ້ນໃສ່ການຮ່ວມມືກັບສຸກສາລາບ້ານ ແລະ ອໍານາດການປົກຄອງໃນຂັ້ນບ້ານໃນການຊອກຫາຄົ້ນຫາກໍລະນີທີ່ເປັນພະຍາດວັນນະໂລກເພື່ອສົ່ງຕໍ່ໃຫ້ໄດ້ຮັບການປິ່ນປົວ ແລະ ໄດ້ຮັບການດູແລຮັກສາ ແລະ ກິນຢາຕໍ່ເນື່ອງ. ນອກຈາກນັ້ນ ພະນັກງານພາກສະໜາມຍັງມີພາລະບົດບາດ ແລະ ໜ້າທີ່ໃນການຈັດຕັ້ງປະຕິບັດໃນວຽກງານໂຄສະນາ, ໃຫ້ຄວາມຮູ້ກ່ຽວກັບການປ້ອງກັນ ແລະ ການ ຢູ່ຮ່ວມກັນກັບຜູ້ທີ່ເປັນພະຍາດວັນນະໂລກ ລວມທັງການສົ່ງເສີມການກິນຢາຕໍ່ໜ້າອາສາສະໝັກ ແລະ ສົ່ງເສີມວຽກງານໂພສະນາການໃຫ້ກັບຜູ້ທີ່ເປັນພະຍາດວັນນະໂລກ.

**ໜ້າທີ່ຮັບຜິດຊອບຫລັກ:**

1. ການມີສ່ວນຮ່ວມຂອງຊຸມຊົນ ແລະ ວຽກງານໂຄສະນາ:
   - ຈັດຕັ້ງປະຕິບັດໂດຍກົງໃນການເຜີຍແຜ່ໃຫ້ຂໍ້ມູນ ແລະ ໃຫ້ສຸຂະສຶກສາກ່ຽວກັບອາການສົງໃສ, ວິທີການປ້ອງກັນ ແລະ ໃຫ້ຂໍ້ມູນສະຖານທີ່ບໍລິການໃນການກວດ ແລະ ປິ່ນປົວພະຍາດວັນນະໂລກໃຫ້ກັບຊຸມຊົນເປົ້າໝາຍໂດຍກົງ.
   - ອໍານວຍຄວາມສະດວກ ແລະ ຈັດງານກິດຈະກໍາພົບປະ ແລະ ໃຫ້ຄວາມຮູ້ຊຸມຊົນໃນພື້ນທີ່ເປົ້າໝາຍທີ່ມີອັດຕາການຕິດເຊື້ອພະຍາດວັນນະໂລກສູງ.
   - ສ້າງກິດຈະກໍາຂໍການສະໜັບສະໜູນໃນການມີສ່ວນຮ່ວມຂອງອໍານາດການປົກຄອງທ້ອງຖິ່ນລວມທັງອໍານາດການປົກຄອງຂັ້ນບ້ານ, ອົງການຈັດຕັ້ງມະຫາຊົນ, ຜູ້ນໍາສາສະໜາ, ເຈົ້າກົກເຈົ້າເລົ່າ ແລະ ຄອບຄົວທີ່ໄດ້ຮັບຜົນກະທົບຈາກພະຍາດວັນນະໂລກ/ເອດສ.

2. ວຽກງານການຊອກຄົ້ນກໍລະນີ:
   - ຈັດຕັ້ງປະຕິບັດໃນການນໍາໃຊ້ເຄື່ອງມືການຊອກຄົ້ນກໍລະນີສົງໃສທີ່ມີອາການສ່ຽງທີ່ຈະເປັນພະຍາດວັນນະໂລກ ໂດຍອີງຕາມເງື່ອນໄຂ 01 ອາການສົງໃສ ແລະ 08 ອາການຮ່ວມ.

CHIAs

- ແຍກປະເພດກຸ່ມເປົ້າໝາຍທີ່ມີອາການສົງໃສ ໂດຍອີງຕາມເງື່ອນໄຂ 01 ອາການສົງໃສ ແລະ 08 ອາການຮ່ວມ, ເພື່ອໃຫ້ມີຄວາມສະດວກໃນການເກັບກໍາ ແລະ ລາຍງານໂດຍສະເພາະແມ່ນກຸ່ມແມ່ຍິງ, ເດັກນ້ອຍ ແລະ ຜູ້ສູງອາຍຸ.
- ອໍານວຍຄວາມສະດວກ ແລະ ສະໜັບສະໜູນໃນການຈັດສົ່ງຕົວຢ່າງຂີ້ກະເທີ່ ເພື່ອສົ່ງໄປກວດບົ່ງມະຕິວັນນະໂລກດ້ວຍເຄື່ອງກວດທີ່ທັນສະໄໝ (GeneXpert)

3. ການເບິ່ງແຍງດູແລຄົນເຈັບວັນນະໂລກ:

- ອໍານວຍຄວາມສະດວກໃນການສົ່ງຕໍ່ຜູ້ທີ່ມີອາການສົງໃສໃຫ້ໄດ້ເຂົ້າຮັບການບົ່ງມະຕິໃນສະຖານທີບໍລິການ ລວມທັງການເຂົ້າເຖິງການກວດດ້ວຍການຊ່ອງພິງເອິກ (X-ray)
- ອໍານວຍຄວາມສະດວກ ແລະ ສະໜັບສະໜູນຜູ້ທີ່ເປັນວັນນະໂລກໄດ້ເຂົ້າຮັບການດູແລ ແລະ ປິ່ນປົວຢ່າງຕໍ່ເນື່ອງ.
- ຕິດຕາມຄົນເຈັບວັນນະໂລກໃນຊຸມຊົນເປັນປະຈໍາເພື່ອແນ່ໃຈວ່າຄົນເຈັບໄດ້ຮັບການກິນຢາຕໍ່ເນື່ອງຕາມແພດໝໍກໍານົດ.
- ສົ່ງເສີມ ແລະ ໃຫ້ຄໍາແນະນໍາຄົນເຈັບ ກິນຢາຕໍ່ໜ້າອາສາສະໝັກຂັ້ນບ້ານທີ່ໄດ່ຜ່ານການຝຶກອົບຮົມຈາກໂຄງການ.
- ໃຫ້ການສະໜັບສະໜູນການດູແລເບິ່ງແຍງທາງດ້ານຈິດໃຈສໍາຫລັບຜູ້ທີ່ເປັນວັນນະໂລກລວມທັງຄອບຄົວທີ່ໄດ້ຮັບຜົນກະທົບ ເພື່ອຫລີກລ້ຽງການຖືກຈໍາແນກລັງກຽດຈາກຄອບຄົວ ແລະ ຊຸມຊົນໃນໄລຍະການປິ່ນປົວ.
- ສົ່ງເສີມຄົນເຈັບວັນນະໂລກ ແລະ ຄອບຄົວທາງດ້ານໂພຊະນາການ ແລະ ອາຫານເສີມໃນເວລາການປິ່ນປົວໂດຍສະເພາະແມ່ນເດັກນ້ອຍ ແລະ ຜູ້ສູງອາຍຸ.

4. ການເກັບກໍາຂໍ້ມູນ ແລະ ການລາຍງານ:

- ບັນທຶກ ແລະ ຮັກສາຂໍ້ມູນທັງໝົດຂອງກິດຈະກໍາທີ່ໄດ້ຈັດຕັ້ງປະຕິບັດລວມທັງກິດຈະກໍາໂຄສະນາ, ການຊອກຄົ້ນ ແລະ ການສົ່ງຕໍ່
- ເກັບກໍາ ແລະ ລາຍງາຍຂໍ້ມູນກໍລະນີຜູ້ທີ່ເປັນພະຍາດວັນນະໂລກ, ການປິ່ນປົວຕໍ່ເນື່ອງ ແລະ ການມີສ່ວນຮ່ວມຂອງຊຸມຊົນ ແລະ ຄອບຄົວ.
- ສົ່ງບົດລາຍງານໃຫ້ກັບ ຫົວໜ້າທີມພາກສະໜາມເປັນປະຈໍາ ແລະ ຕົງຕາມເວລາທີ່ກໍານົດໄວ້.

5. ການໃຫ້ຄວາມຮ່ວມມື ແລະ ການປະສານງານ:

- ເຮັດວຽກຢ່າງໃກ້ຊິດກັບອາສາສະຂັ້ນບ້ານ ແລະ ອາສາສະໝັກຊຸມຊົນເພື່ອໃຫ້ແນ່ໃຈວ່າຜູ້ປ່ວຍເປັນວັນນະໂລກໄດ້ຮັບການດູແລເບິ່ງແຍງຢ່າງຕໍ່ເນື່ອງ
- ເຂົ້າຮ່ວມກອງປະຊຸມ ແລະ ການຝຶກອົບຮົມເປັນປະຈໍາຕາມການມອບໝາຍຈາກຫົວໜ້າສາຍງານ
- ຮ່ວມມືກັບອົງການຈັດຕັ້ງຊຸມຊົນ ແລະ ຄູ່ຮ່ວມງານທີ່ກ່ຽວຂ້ອງເພື່ອເພີ່ມທະວີການມີສ່ວນຮ່ວມໃນການໃຫ້ບໍລິການທີ່ມີປະສິດຕິພາບໃນວຽກງານການປ້ອງກັນ, ການດູແລເບິ່ງແຍງ ແລະ ການສະໜັບສະໜູນຜູ້ທີ່ໄດ້ຮັບຜົນກະທົບການພະຍາດວັນນະໂລກ.

ເງື່ອນໄຂໃນການສະໝັກ:

- ຈົບຊັ້ນສູງ, ທຽບເທົ່າປະລິນຍາຕີ ຫຼື ຈົບຊັ້ນ ມ ປາຍ, ມີປະສົບການຮຽນດ້ານສຸຂະພາບຈະພິຈາລະນາເປັນພິເສດ
- ມີປະສົບໃນການເຮັດວຽກກ່ຽວກັບດ້ານສຸຂະພາບ ຫຼື ເຄີຍເປັນອາສາສະໝັກຊຸມຊົນມາກ່ອນ
- ມີທັກສະໃນການສື່ສານທີ່ດີ ແລະ ມີພຶກໄຫວໃນການເຂົ້າກັບຄູ່ຮ່ວມງານໄດ້ເປັນຢ່າງດີ
- ເວົ້າ ແລະ ຂຽນພາສາລາວໄດ້ຢ່າງຄ່ອງແຄ້ວ ຖ້າຫາດສາມາດສື່ສານພາສາຊົນເຜົ່າໄດ້ຈະຖືກພິຈາລະນາເປັນພິເສດ
- ເປັນຄົນພື້ນທີ່ ແຂວງສະຫວັນນະເຂດ ແລະ ອາໄສຢູ່ເມືອງເປົ້າໝາຍຂອງໂຄງການ
- ສາມາດເດີນທາງ ແລະ ຢູ່ຮ່ວມກັບຊຸມຊົນໃນເມືອງເປົ້າໝາຍໄດ້
- ສາມາດນຳໃຊ້ຄອມພິວເຕີຂັ້ນພື້ນຖານ
- ມີຄວາມຮັບຮູ້, ແລະ ເຂົ້າໃຈຕໍ່ຄວາມເທົ່າທຽບທາງດ້ານບົດບາດຍິງ-ຊາຍ, ໂດຍບໍ່ມີພຶດຕິກຳຈຳແນກລັງກຽດລວມທັງມີຈັນຍາບັນໃນການດູແລເບິ່ງແຍງວຜູ້ທີ່ໄດ້ຮັບຜົນກະທົບຈາກວັນນະໂລກ ແລະ ພະຍາດຮ່ວມ.

**ທາງດ້ານຫລັກການຈັນຍາບັນຈັນຍາທຳ:**
ພະນັກງານທຸກຄົນທີ່ມີສັນຍາຮ່ວມງານກັບ ສສຮ ຕ້ອງປະຕິບັດຕາມຫລັກການດ້ານຈັນຍາບັນຈັນຍາທຳຂອງ ສສຮ ແລະ ຜູ້ໃຫ້ທຶນຢ່າງເຂັ້ມງວດ.

**ວິທີການສະໝັກ:**
ສຳຫລັບຜູ້ທີ່ມີຄວາມສົນໃຈຢາກສະໝັກເປັນຄູ່ຮ່ວມງານກັບ ສສຮ ສາມາດສົ່ງໜັງສືຂໍສະໝັກວຽກພ້ອມຂັດຕິດຊີວະປະຫວັດພ້ອມດ້ວຍລາຍຊື່ຜູ້ທີ່ຢັ້ງຢືນ 03 ທ່ານ, ມາທີ່: ອີເມວ chindavanh.chias@gmail.com ຕາມເອກະສານຈັດຊື້ຈັດຈ້າງເລກທີ (24-SB1874) ແລະ ວັນເວລາທີ່ຖືກກຳນົດໄວ້ໃນຂໍ້ມູນຂ້າງເທິງ.

**ໂອກາດທີ່ເທົ່າທຽມ**
ສສຮ ໃຫ້ໂອກາດທຸກຄົນຢ່າງທົ່ວເຖິງ ແລະ ເທົ່າທຽມໃນການຮັບສະໝັກ ລວມທັງການສົ່ງເສີມ ແລະ ໃຫ້ຄວາມສຳຄັນທາງດ້ານຄວາມຫລາກຫລາຍເຊັ່ນ: ກຸ່ມຄົນຫລາກຫລາຍທາງເພດ, ແມ່ຍິງ, ຊົນເຜົ່າ, ບຸກຄົນທີ່ມີຄວາມພິການ ແລະ ຜູ້ທີ່ໄດ້ຮັບຜົນກະທົບຈາກພະຍາດວັນນະໂລກ, ເອດສ ແລະ ໄຂ້ຍຸງ. ພວກເຮົາເຊື່ອວ່າ ການມີສ່ວນຮ່ວມຂອງທຸກພາກສ່ວນເທົ່ານັ້ນທີ່ສາມາດຍຸດຕິພະຍາດວັນນະໂລກ ແລະ ເອດສ.